ພັນທະມິຕເພື່ອປະຊາທິປະໄຕໃນລາວ
ALLIANCE FOR DEMOCRACY IN LAOS
Alliance pour la Démocratie au Laos

*Letmather Str.71, 58119 Hagen, Germany. Tel & Fax: 0049( 2334) 44 44 668, E-Mail: alliance-lao@alice.de*
*www.laoalliance.org*

# ຖແລງການ ພປລ ຕໍ່ເຫດການ ເຂື່ອນແຕກທີ່ເຊປຽນ- ເຊນ້ຳນ້ອຍ

ເຫດການເຂື່ອນແຕກ ທີ່ເຊປຽນ-ເຊນ້ຳນ້ອຍ ເມືອງສຫນາມໄຊ ແຂວງອັດຕະປື ຜ່ານມາ ໄດ້ນຳເອົາຄວາມເສັຽຫາຍ ອັນໃຫຍ່ຫລວງ ມາໃຫ້ແກ່ ພໍ່ແມ່ພີ່ນ້ອງ ປະຊາຊົນລາວ ຫລາຍກວ່າ 6.600 ຄົນ ໃນນັ້ນມີຜູ້ເສັຽຊີວິດ ຫລາຍກວ່າ 300 ຄົນອັນເປັນຂ່າວ ທີ່ໂດ່ງດັງໄປທົ່ວໂລກ. ພວກເຮົາອົງການພັນທະມິຕເພື່ອປະຊາທິປະໄຕໃນລາວ ພ້ອມທັງຊຸມຊົນລາວ ໃນທົ່ວໂລກ ມີຄວາມໂສກເສົ້າ ສລົດໃຈເປັນຢ່າງຍິ່ງ ມາຍັງ ຄອບຄົວຍາດຕິ ພໍ່ແມ່ພີ່ນ້ອງລາວ ຜູ້ທີ່ຖືກເຄາະຮ້າຍ ອັນໃຫຍ່ຫລວງ ດັ່ງກ່າວ .

ເຂື່ອນ ເຊປຽນ-ເຊນ້ຳນ້ອຍ ເປັນເຂື່ອນທີ່ສ້າງຍັງບໍ່ສຳເຣັດ ໄດ້ແຕກ ໃນຕອນກາງຄືນ ຂອງວັນທີ່ວັນທີ່ 23 ກໍຣະກະດາ 2018 ພາຍຫລັງທີ່ມີຝົນຕົກຫນັກໃນເຂດດັ່ງກ່າວ , ເປັນເຂື່ອນ ທີ່ ໄດ້ມີການລົງທຶນສ້າງເຖິງ 1,02 ຕື້ໂດລາສະຫະຣັຖ ໂດຍມີ ບໍຣິສັດ SK Engineering and Construction (**SKE**) ຈາກ ປະເທດເກົາຫຼີໃຕ້ ຖືຫຸ້ນ 26 ສ່ວນຮ້ອຍ, ບໍຣິສັດ Korea Western Power ຫຼື **KOWEPO** ຈາກປະເທດເກົາຫຼີໃຕ້ ຖືຫຸ້ນ 25 ສ່ວນຮ້ອຍ, ບໍຣິສັດ General Holding Public ຫຼື **RATCH** ຈາກປະເທດໄທ 25 ສ່ວນຮ້ອຍ ແລະບໍຣິສັດ ຣັຖວິສາຫະກິດລາວ ຫຼື **LHSE** ຖືຫຸ້ນ 24 ສ່ວນຮ້ອຍ.

ໃນວັນທີ່ 13 ເດືອນກຸມພາ 2017 ປະຊາຊົນລາວ ບ້ານຫ້ວຍຊອຍ ໄດ້ລຸກຂຶ້ນມາຕໍ່ວ່າ ຂັດຄ້ານບໍ່ໃຫ້ ມີການສ້າງເຂື່ອນດັ່ງກ່າວ ແລະ ຂັດຄ້ານໃນການການຍຶດທີ່ດິນ ແຕ່ ທາງການ ສປປລາວຍັງໄດ້ດື້ດ້ານບັງຄັບຍຶດເອົາດິນປະຊາຊົນ ແລະ ກໍບໍ່ໃຫ້ຄ່າຊົດເຊີຍເທົ່າທີ່ຄວນ.

ເຫດການເຂື່ອນແຕກຄັ້ງນີ້ ທາງການ ສປປລາວ ອ້າງວ່າ ຍ້ອນ ຝົນຕົກຫລາຍ ຈຶ່ງເຮັດໃຫ້ເຂື່ອນແຕກ, ແຕ່ວ່າ ນັກວິຊາການສາກົນ ກ່າວວ່າ ຍ້ອນມາຕະຖານ ການສ້າງເຂື່ອນ ທີ່ຜິດພາດ ບໍ່ມີການຄິດໄລ່ ຜົນກະທົບທີ່ຈະເກີດຂຶ້ນ ຈຶ່ງເປັນສາຍເຫດ ເຮັດໃຫ້ເຂື່ອນແຕກ. ຜ່ານມາໄດ້ມີເຫດການເຂື່ອນແຕກມາແລ້ວໃນລາວ ເຖິງ ສາມຄັ້ງເຊັ່ນ :ໃນປີ 2016 **ເຂື່ອນເຊຂມານ** ແຂວງເຊກອງ, ໃນວັນທີ່ 11 ກັນຍາ 2017 ເຂື່ອນນ້ຳອ້າວ ທີ່ທ່າໂທມ ທີ່ແຂວງ ໄຊສົມບູນ, ຕໍ່ມາ ກໍແມ່ນ ວັນທີ່ 22 ກໍຣະກະດາ 2018 **ເຂື່ອນນ້ຳແບງ** ທີ່ເມືອງປາກແບ່ງ ແຂວງ ອຸດົມໄຊ ມີປະຊາຊົນ ໄດ້ຮັບຜົນກະທົບ ເຖິງ 4721ຄົນ ແລະບ້ານເຮືອນ 125 ຫລັງຖືກເສັຍຫາຍ . ໂດຍ ທີ່ທາງການ ສປປລາວ ບໍ່ໄດ້ສົນໃຈ ຄົ້ນຄວ້າຫາ ສາຍເຫດແລະ ບໍ່ຫາຊ່ອງທາງຫລີກລຽງ. ເຖິງແມ່ນວ່າອົງການປົກທັມມະຊາດສາກົນໄດ້ຕັກເຕືອນ ຜູ້ນຳສປປລາວ ວ່າການ ສ້າງເຂື່ອນທີ່ບໍ່ມີຂອບເຂດໃນລາວຈະນຳຜົນເສັຽຫາຍ ຫລາຍເພີ່ມຂຶ້ນ ແລະ ໃນອະນາຄົດ ຜູ້ຮັບຊື້ໄຟຟ້າຈະຫລຸດລົງ ແຕ່ຜູ້ນຳພັກລັດ ສປປລາວ ກໍຍັງດື້ດ້ານສ້າງຕໍ່ໄປ.

ພວກເຮົາ ພປລ ເຫັນວ່າ ເຫດການ ເຂື່ອນແຕກຄັ້ງນີ້ ກໍແມ່ນຍ້ອນຍະໂຍບາຍການ ເມືອງ ອັນຜິດພາດ ຂອງ ຜູ້ນຳພັກລັດ ສປປລາວ ທີ່ ສ້າງເຂື່ອນ ຢ່າງບໍ່ມີຂອບເຂດ ແລະ ບໍ່ຄິດໄລ່ຜົນໄດ້ຜົນເສັຽຂອງ ທັມມະຊາດ ແລະ ຂອງປະຊາຊົນ,ບໍ່ໄດ້ມີການກວດກາ ການສ້າງເຂື່ອນວ່າ ຈະມີມາຕະຖານຮັບປະກັນ ໄພພິບັດໄດ້ຢ່າງໃດ. ໃນປັດຈຸບັນປະຊາຊົນລາວ ທີ່ອາໃສຢູ່ໃຕ້ເຂື່ອນ ແຫ່ງຕ່າງໆໃນລາວ ມີຄວາມຢ້ານກົວ ວ່າ ອາດຈະມີເຂື່ອນແຕກ ຂຶ້ນອີກ ຈຶ່ງພາກັນ ຂຶ້ນໄປຢູ່ເຂດພູສູງ, ຫ້າວັນຕໍ່ມາພາຍຫລັງເຂື່ອນແຕກ ທີ່ ເຊປຽນ- ເຊນ້ຳນ້ອຍ ການ ສປປລາວ ໄດ້ ຫ້າມບໍ່ໃຫ້ ນັກຂ່າວສາກົນເຂົ້າໄປເກັບກຳຂ່າວ ເຫດການເຂື່ອນແຕກ ໃນລາວ ອີກ ຊຶ່ງເປັນການປົກປິດ ຂໍ້ມູນຄວາມເປັນຈິງທີ່ເກີດຂຶ້ນໃນລາວ.

ເຂື່ອນທີ່ສ້າງມາໄດ້ຜ່ານມາ ຢ່າງຫລວງຫລາຍ ກໍ່ບໍ່ໄດ້ນຳລາຍໄດ້ເຂົ້າກອງທຶນຂອງຊາດ ແລະ ບໍ່ໄດ້ນຳ ຜົນປະໂຫຍດ ມາໃຫ້ ແກ່ ປະຊາຊົນລາວ ຢ່າງແທ້ຈິງ, ປະຊາຊົນລາວ ປະມານ 30 ເປີເຊັນຍັງບໍ່ມີໄຟຟ້າໃຊ້ ແລະ ກໍບໍ່ໄດ້ສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນລາວ ແຕ່ຢ່າງໃດ. ການສ້າງເຂື່ອນ ຢ່າງຫລວງຫລາຍ ໃນລາວ ແມ່ນ ຍ້ອນວ່າ ມີການສໍ້ກົງໃນອຳນາດການປົກຄອງ ສປປລາວ ທີ່ ອາໃສເງິນກິນສິນບົນໂຄງການຕ່າງໆ, ມີການສໍ້ກົງທຸກອຳນາດການປົກຄອງໃນລາວ ທີ່ບໍ່ສາມາດ ແກ້ໄຂໄດ້. ທັ້ງ

ຫມົດນີ້ ນີ້ ກໍຍ້ອນວ່າການປົກຄອງໃນລາວ ເປັນການປົກຄອງຜະເດັດການ ທີ່ຈຳກັດສິດທິຂອງ ປະຊາຊົນໃນການປາກເວົ້າ ການຮຽກຮ້ອງເອົາຄວາມເປັນທັມ.

ພວກເຮົາເຫັນວ່າ ການສ້າງເຂື່ອນທີ່ບໍ່ມີຂອບເຂດ ໃນລາວ ຍັງຈະນຳຜົນເສັຽຫາຍ ເພີ່ມຂື້ນ ໄປຈັກ ໃຊ້ ແລະ ປະຊາຊົນຈະໄດ້ຮັບຜົນເສັຽຫາຍ ເພີ່ມຂຶ້ນ ດ້ວຍການຍຶດທີ່ດິນຂອງປະຊາຊົນ ແລະ ເປັນການ ການທຳລາຍທຳມະຊາດ.

ດັ່ງນັ້ນ ພວກເຮົາ ອົງການ ພັນທະມິຕເພື່ອປະຊາທິປະໄຕໃນລາວ ຮ່ວມກັບຊຸມຊົນລາວໃນທົ່ວໂລກ ແລະ ປະຊາຊົນລາວ ໃນປະເທດ ຈຶ່ງທວງມາ ຄື:

1.ທວງໃຫ້ທາງການ ສປປລາວ ຍຸດຕິໂຄງການສ້າງເຄື່ອນໃນລາວ ທຸກໆໂຄງການ

2.ທວງໃຫ້ ທາງງການ ສປປລາວ ກວດກາທຸກເຂື່ອນທີ່ໄດ້ສ້າງມາແລ້ວ ແລະ ໃຫ້ຮັບເອົານັກວິຊາການ ສາກົນທີ່ບໍ່ຂຶ້ນກັບ ທາງການ ສປປລາວ ເຂົ້າໄປກວດກາຄຸນນະພາບ ເຂື່ອນທຸກແຫ່ງໃນລາວ ແລະຫາ ວິທີປົກປ້ອງຄວາມປອດໄພ ຂອງປະຊາຊົນທີ່ຢູ່ລຸ່ມເຂື່ອນ.

3. ທຸກໆໂຄງການກໍ່ສ້າງໃນລາວ ຕ້ອງໃຫ້ ມີ ການປະຊຸມໂຕະມົນ ທີ່ມີ ທາງການ ສປປລາວ ຮ່ວມກັບ ນັກວິຊາການ ສາກົນປົກປ້ອງທັມະຊາດ, ນັກວິຊາການສາກົນ, ຂອງ ກຸ່ມອາຊຽນ ຫລື ຂອງ ສະຫະພາບຢູ ໂຣບ ແລະ ອົງການບໍ່ຂຶ້ນກັບຣັກຖບານ ທີ່ເປັນເອກະຣາດ ເຂົ້າຮ່ວມຄົ້ນຄວ້າ ເຊັ່ນ ພປລ

4. ການສຳຫລວດ ສ້າງໂຄງການ ຕ່າງໆໃນລາວ ຕ້ອງໃຫ້ ປະຊາຊົນລາວ ມີສ່ວນຮ່ວມ ໃນການ ກວດການ ເປັນຕົ້ນແມ່ນ ບັນຫາການສໍ້ກົງ ໃນໂຄງການຕ່າງໆ.

5. ພວກເຮົາ ທວງໃຫ້ ທາງການ ສປປລາວ ເປີດເຜີຍຂໍ້ມູນຄວາມຈິງ ທຸກດ້ານ ສາຍເຫດທີ່ເຮັດໃຫ້ ເຂື່ອນແຕກ ພາຍໃຕ້ການກວດກາ ຂອງ ສະຫະປະຊາຊາດ

6. ພວກເຮົາ ທວງໃຫ້ ເຈົ້າຂອງໂຄງການສ້າງເຂື່ອນ ທຸກບໍຣິສັດ ຈົ່ງໃຫ້ ຊົດເຊີຍຄວາມເສັຽຫາຍຂອງ ປະຊາຊົນລາວທຸກຄົນທີ່ໄດ້ຮັບເຄາະ ຈາກໄພພິບັດເຂື່ອນແຕກນັ້ນ ຢ່າງເຫມາະສົມ.

ພວກເຮົາອົງການ ພັນທະມິຕເພື່ອປະຊາທິປະໄຕໃນລາວ ບໍ່ໄດ້ມີຄວາມຢ້ານກົວຕໍ່ການເອົາຄວາມ ຮັບຜິດຊອບຕໍ່ການແກ້ໄຂບັນຫາດັ່ງກ່າວ ດັ່ງນັ້ນ ພວກເຮົາຈຶ່ງສເນີ ເຂົ້າຮ່ວມໃນການ ຈັດກອງປະຊຸມ ໂຕະມົນ.

ທີ່ເຢັຽຣະມັນ ວັນທີ່ 29 ກໍຣະກະດາ 2018




ປະທານ ພັນທະມິຕເພື່ອປະຊາທິປະໄຕໃນລາວ

ດຣ. ບຸນທອນ ຈັນທະລາວົງ-ວີເຊີ


**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Tel.& Fax: +49-2334-44 44 668, Email: chanthalavong@aol.com oadlPjößko

**Australia:** **Mr.Khampheo Lathamany**, Vice-President, 53 McIntyre Drive,Altona Vic., Australia
Tel.:+61-3-9398 45 42,cell: 61-4-04169927, Email: ksithandone@hotmail.com

**Canada:** **Mr.Kambane Anonthisen,** Vice-President, 84 Highgatz Rord Kichener ,ONT, Tel. cell: 519-58 80 502, email: khambane@hotmail.com , **Secretary Mr. Kongsay Bounnapha**, 7 Birchfield , Avenue Canada, Ontario, K2M 2 N4, Tel.+1-613-271-8027,email: kxbounnapha@gmail.com

**France:** **Mr.Sovath Thongsavat** Vice-President , ADL Fr. , 1 chemin du bief 01230 Tenay, France, Tel.+33-4-74 36 56 44, or +33- 6-63 99 42 09, Email: thinan.t@laposte.net

**New Zealand:** **Mr.Touy Manikham** Vice-President, 1 The Anchorage Whitby ,Wellington 5024, NZ, Tel.: +64-4-234 1535, Email: touy.manikham@gmail.com